Mennonite Church Eastern Canada

# ລັກສະນະ

**ໂບດ ເມັນໂນໄນ ພາກຕາເວັນອອກການາດາ ແມ່ນຊຸມຊົນທີ່ມີຄວາມຫລາກຫລາຍ**

**ແມ່ນເປັນຜູ້ໄດ້ຮັບການປ່ຽນແປງດ້ວຍຄວາມຮັກຂອງພຣະເຈົ້າ**

**ແລະໄດ້ຮັບແຮງບັນດານໃຈຈາກຄວາມຫວັງທີ່ເຮົາໄດ້ສັມຜັດຈາກອົງພຣະເຍຊູຄຣິສ**

**ຄືຜູ້ທີ່ໄດ້ຮັບການເອີ້ນໃຫ້ປະຕິບັດໂດຍອໍານາດຂອງພຣະວິນຍານບໍລິສຸດ.**

*ພວກເຮົາເຊື່ອວ່າພຣະເຈົ້າກໍາລັງເອີ້ນໃຫ້ ໂບດ ເມັນໂນໄນພາກຕາເວັນອອກ ການາດາເປັນຄຣິສຕະຈັກອະນາແບັບຕິສ ເມັນໂນໄນ ເປັນຜູ້ຮ່ວມວຽກງານຕາມພັນທະສັນຍາໃນ ໂບດ ເມັນໂນໄນ ການາດາ ແລະ ກອງປະຊຸມຫລວງເມັນໂນໄນໂລກ ພວກເຮົາມີປະເພນີທີ່ມີປະຫວັດສາດຢ່າງຍາວນານທີ່ເນັ້ນໃສ່ໃນເລື້ອງ ພຣະເຍຊູຄຣິສເປັນສູນກາງແຫ່ງຄວາມເຊື່ອຂອງພວກເຮົາ ຊຸມຊົນເປັນສູນກາງຂອງຊີວິດພວກເຮົາ ແລະ ການປອງດອງແມ່ນສູນກາງແຫ່ງວຽກງານຂອງພວກເຮົາ. ໃນຖານະທີ່ເປັນຊຸມຊົນ ແຫ່ງຄຣິສຕະຈັກ, ພວກເຮົາຊອກຫາການເຂົ້າຮ່ວມພາລະກິດຂອງພຣະເຈົ້າໃນໂລກນີ້, ເພື່ອສົ່ງເສີມໃຫ້ທຸກຄົນຕອບສະນອງຕໍ່ ຂອງປະທານທີ່ພຣະເຈົ້າໃຫ້ດ້ວຍຄວາມຮັກ ໂດຍການເປີດເຜີຍຜ່ານອົງພຣະເຍຊູຄຣິດເຈົ້າ, ດັ່ງທີ່ໄດ້ພັນລະນາໄວ້ໃນພຣະຄັມພີ.*

# ຈຸດປະສົງ

ພວກເຮົາມາຮວມກັນຢູ່ໃນຖານະໂບດທີ່ຢູ່ຊົງເຂດດຽວກັນ ເພື່ອ:

- ເພື່ອກະຕຸ້ນຄຣິສຕະຈັກ ໃນການນະມັດສະການ, ການສ້າງສາວົກ ແລະ ພັນທະກິດ
- ຫນູນນໍ້າໃຈຜູ້ນໍາໃຫ້ມີຄວາມຫວັງ, ວິໄສທັດ ແລະ ການປ່ຽນແປງ
- ຮອບຮວມການຊ່ວຍເຫລືອປອງດອງຂອງພຣະເຈົ້າ ໃນທຸກສັບພະສິ່ງທີ່ພຣະເຈົ້າສ້າງ

# ຄຸນຄ່າ

**ການເປັນຜູ້ທີ່ໄດ້ຮັບຄວາມຮັກ** – ຕໍ່ໜ້າພຣະເຈົ້າ ມະນຸດທຸກຄົນມີຄວາມເທົ່າທຽມ ແລະ ມີກຽດສັກສີ , ໄດ້ຮັບການເນຣະມິດ ສ້າງຂຶ້ນໃນຮູບລັກສະນະຂອງພຣະເຈົ້າ.

**ຝ່າຍຈິດວິນຍານ** – ນະມັດສະການ ແລະ ການອະທິຖານແມ່ນພື້ນຖານຂອງພວກເຮົາໃນ ການເຂົ້າເຖິງ ຄວາມຮັກຂອງພຣະຜູ້ເປັນເຈົ້າ ແລະ ເຊື່ອມຕໍ່ພວກເຮົາເຂົ້າກັບພຣະວິນຍານແຫ່ງການຟື້ນຟູ.

**ການປ່ຽນແປງ** – ພວກເຮົາມີຄວາມກະຕືລືລົ້ນທີ່ຈະເຫັນສິ່ງທີ່ພຣະເຈົ້າໄດ້ປະທານໃຫ້ແກ່ຊີວິດຂອງພວກເຮົາ ແລະ ໃນໂລກ. ພວກເຮົາເປີດຮັບການປ່ຽນແປງ.

**ຊຸມຊົນ** – ພວກເຮົາເຕີບໃຫຍ່, ຮຽນ ແລະ ສ້າງສໍາພັນທະພາບທີ່ດີໃຫ້ແກ່ກັນແລະກັນ, ຮັບຟັງສຽງຂອງພຣະເຈົ້າຮ່ວມກັນ.

Mennonite Church Eastern Canada

**ໄມຕີຈິດ** – ທຸກຄົນແມ່ນຜູ້ໄດ້ຮັບການຕ້ອນຮັບຢູ່ຕໍ່ໜ້າໂຕະແຫ່ງພຣະຄຸນຂອງພຣະເຈົ້າ.

**ສັນຕິສຸກ ແລະ ຄວາມຍຸດຕິທໍາ** – ພວກເຮົາໄດ້ອາໄສຢູ່ໃນ ຄວາມຮົ່ມເຢັນເປັນສຸກຂອງພຣະເຈົ້າ ທີ່ມີໃຫ້ແກ່ທຸກສັບພະສິ່ງທີ່ພຣະອົງຊົງສ້າງ.

**ລັກສະນະ, ຈຸດປະສົງ ແລະ ຄຸນຄ່າ ພ້ອມກັນກັບນິມິດທີ່ພວກເຮົາໄດ້ເຊື່ອຖືຮ່ວມກັນທີ່ອປະເທດໃນຖານະໂບດ ເມັນໂນໄນ ການາດາ:**

**ພຣະເຈົ້າເອີ້ນຫາພວກເຮົາໃຫ້ເປັນຜູ້ຕິດຕາມພຣະເຢຊູຄຣິສ ແລະ, ດ້ວຍອໍານາດຂອງພຣະວິນຍານບໍລິສຸດ, ເຮັດໃຫ້ເຮົາເຕີບໃຫຍ່ເປັນຊຸມຊົນແຫ່ງພຣະຄຸນ, ຄວາມມ່ວນຊື່ນ ແລະ ສັນຕິສຸກ ດັ່ງນັ້ນ ເພື່ອການປິ່ນປົວ ແລະ ຄວາມຫວັງໃຈຂອງພຣະຜູ້ເປັນເຈົ້າຈະໄດ້ໄຫລຜ່ານ ພວກເຮົາຢູ່ໃນໂລກ.**

## ຄວາມສໍາຄັນ ສໍາລັບປີ 2022-2027

- **ການຫັນທິດທາງການປ່ຽນແປງ:** ເສີມສ້າງວັດທະນະທໍາການຮຽນຮູ້, ການປະດິດຄິດແຕ່ງ ແລະ ການປັບຕົວເພື່ອໃຫ້ເຂົາກັບໂບດເພື່ອຫັນທິດທາງ ເຂົ້າສູ່ລະດູການປ່ຽນແປງ. ສິ່ງນີ້ຮວມທັງການຄົ້ນຫາຫົນທາງໃໝ່ໃນການຕິດຕາມພຣະເຍຊູຄຣິດ ແລະ ຮ່ວມເປັນຄຣິສຕະຈັກນໍາກັນ.

- **ການພັດທະນາຜູ້ນໍາ:** ສ້າງຄວາມເຂັ້ມແຂງດ້ານການເປັນຜູ້ນໍາຝ່າຍວິນຍານ ເພື່ອ ເພີ່ມພູນຄວາມເຊື່ອ, ແລະເສີມສ້າງໃຫ້ຜູ້ຮັບໃຊ້ມີພາລະໃຈໃນການຕັ້ງໂບດໃຫມ່, ແລະໃນວຽກງານແຫ່ງການລ້ຽງດູ ພ້ອມທັງສ້າງຜູ້ນໍາໂບດເພື່ອຮັບໃຊ້ໃນຄຣິສຕະຈັກ.

- **ການສ້າງສາວົກຢູ່ໃນຊື່ວເຊັ່ນຄົນ:** ຮ່ວມມືກັນໃນກຸ່ມຄຣິສຕະຈັກ ແລະ ມີສ່ວນຢູ່ໃນວຽກງານ ເພື່ອ ສະໜັບສະໜູນສ້າງສາວົກໃນຫລາຍໆລຸ່ນ ໃນເລື້ອງການສົ່ງເສີມຄວາມເຊື່ອ, ໂດຍການຕິດຕາມຊາວໜຸ່ມ ແລະ ຜູ້ໃຫຍ່ ໃຫ້ມີໂອກາດໃນການພັດທະນາຄວາມເປັນຜູ້ນໍາ.

- **ໂອບອ້ອມຄວາມຫລາກຫລາຍ:** ເຊື້ອເຊີນ ແລະ ທ້າທາຍໃຫ້ໂບດຄົ້ນຫາຄວາມຫລາກຫລາຍ ແລະ ຄວາມສົມບູນພາຍໃນຄົນຂອງພຣະເຈົ້າ. ສິ່ງນີ້ຕ້ອງປະກອບດ້ວຍການປ່ຽນແປງດ້ານຫົວໃຈ, ຈິດໃຈ, ນະໂຍບາຍ ແລະ ໂຄງສ້າງອື່ນໆດັ່ງທີ່ພວກເຮົາໄດ້ມີຊີວິດມາເພື່ອຮຽກຮ້ອງໃຫ້ເກີດຄວາມຫລາກຫລາຍ, ການມີສ່ວນຮ່ວມ ແລະ ເປັນຄຣິສຕະຈັກທີ່ມີຄວາມຫລາກຫລາຍທາງດ້ານວັດທະນະທັມ.

- **ຊອກຫາສັນຕິສຸກ ແລະ ຄວາມຍຸດຕິທັມ:** ສະໜັບສະໜູນແລະຮ່ວມມືກັບຄຣິສຕະຈັກເພື່ອໃຫ້ມີການເຂົ້າຮ່ວມແກ້ບັນຫາດ້ານສັນຕິສຸກແລະ ຄວາມຍຸດຕິທັມ, ທີ່ເປັນພື້ນຖານຂອງຫລັກຂໍ້ຄວາມເຊື່ອຂອງ ອະນາແບັບຕິສ-ເມັນໂນໄນ ເພື່ອສ້າງສໍາພັນທະພາບລະຫວ່າງ ຜູ້ຕັ້ງຖິ່ນຖານໃຫມ່ ກັບ ຊົນຊາວພື້ນເມືອງ, ໃຫ້ມີການເອົາໃຈໃສ່ດ້ານສະພາບອາກາດແລະສິ່ງແວດລ້ອມ, ການເສີມສ້າງຄວາມສາມາດໃນຍອມຮັບວັດທະນະທັມທີ່ແຕກຕ່າງ ແລະ ລົບລ້າງການແບ່ງແຍກຊົນຊາດ ທັງຫມົດແມ່ນສິ່ງທີ່ໄດ້ຕັ້ງເປົ້າຫມາຍໄວ້ໃນຕອນນີ້.